ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກຳມະບານຮາກຖານ ທຄຕລ ມີການຈັດຕັ້ງ ແລະ ກອງທຶນທີ່ເຂັ້ມແຂງ




ກອງປະຊຸມໃຫຍ່ຜູ້ແທນ ກຳມະບານ ສະໄໝທີ X ຂອງກຳມະບານຮາກຖານທະນາຄານການຄ້າຕ່າງປະເທດລາວມະຫາຊົນ (ທຄຕລ) ໄດ້ສຳເລັດລົງດ້ວຍໝາກຜົນອັນຈົບງາມໃນວັນທີ 29 ກຸມພາ 2020 ທີ່ຫ້ອງປະຊຸມໃຫຍ່ ສະຖາບັນການທະນາຄານ ນະຄອນຫຼວງວຽງຈັນ. ໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍນາງ ຂັນແກ້ວ ຫຼ້າມະນີເງົາ ຄະນະພັກທະນາຄານແຫ່ງ ສປປ ລາວ (ທຫລ), ຄະນະບໍລິຫານງານສະຫະພັນ ສູນກາງກຳມະບານລາວ, ປະທານສະພັນກຳມະບານ ທຫລ; ສະຫາຍ ພູຊົງ ຈັນທະຈັກ ຄະນະພັກ ທຫລ, ເລຂາຄະນະພັກຮາກຖານ ທຄຕລ; ພ້ອມນີ້, ກໍ່ມີບັນດາຜູ້ຕາງໜ້າຄະນະຮາກຖານກຳມະບານ ທີ່ຂຶ້ນກັບສະພັນກຳມະບານ ທຫລ, ອົງການຈັດຕັ້ງມະຫາຊົນ-ຄະນະໜ່ວຍ ແລະ ຜູ້ແທນສະມາຊິກກຳມະບານ ທຄຕລ ເຂົ້າຮ່ວມ.

ກອງປະຊຸມໃຫຍ່ ໄດ້ຜ່ານຮ່າງບົດລາຍງານການເມືອງ 5 ປີຜ່ານມາ ຊຶ່ງຄະນະຮາກຖານກຳມະບານ ທຄຕລ ໄດ້ຖືສຳຄັນຕໍ່ການ ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ຖັນແຖວພະນັກງານ-ກຳມະກອນ ໂດຍລວມມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ, ມີການຫັນປ່ຽນທາງດ້ານແນວຄິດ, ຈິນຕະນາການ ແລະ ເປັນເອກະພາບຕໍ່ການຈັດຕັ້ງປະຕິບັດແນວທາງ ກໍ່ຄືວິໄສທັດ-ແຜນຍຸດທະສາດ, ແຜນການ ເຄື່ອນໄຫວວຽກງານວິຊາສະເພາະຂອງ ທຄຕລ; ປັດຈຸບັນ ຮາກຖານກຳມະບານ ມີ 66 ໜ່ວຍຂຶ້ນກັບ ແລະ ມີສະມາຊິກກຳມະບານທັງໝົດ 951 ສະຫາຍ ເພີ່ມຂຶ້ນ 37% ໃນນີ້ມີຍິງ 482 ສະຫາຍ, ລະດັບການສຶກສາ ປະລິນຍາເອກ 2 ສະຫາຍ, ປະລິນຍາໂທ 268 ສະຫາຍ, ອະນຸປະລິນຍາໂທ-ປະລິນຍາຕີ ແລະ ຊັ້ນສູງ 656 ສະຫາຍ ແລະ ສະມາຊິກກຳມະບານເຂົ້າເປັນສະມາຊິກພັກ 198 ສະຫາຍ.

ພ້ອມດຽວກັນນັ້ນ; ຍັງຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າ ໂດຍໄດ້ເປັນເຈົ້າການປຸກລະດົມສະມາຊິກກຳມະບານໃນທົ່ວຮາກຖານ ປະກອບສ່ວນຢ່າງເປັນເຈົ້າການເຂົ້າໃນວຽກງານວິຊາສະເພາະ ແລະ ວຽກງານສຳຄັນອື່ນໆ ໂດຍສະເພາະການຄຸ້ມຄອງການເງິນ, ຊັບສົມບັດ ໄດ້ປະຕິບັດຢ່າງຖືກຕ້ອງ, ໂປ່ງໃສ ມີການສະຫຼຸບແຜນໃຊ້ຈ່າຍຖືກຕ້ອງ ແລະ ລວມຍອດເງິນຄົງມາ

ຮອດເດືອນ 12/2019 ມີຈຳນວນ 216,8 ລ້ານກີບ ເພີ່ມຂຶ້ນ 172,8 ລ້ານກີບ ທຽບໃສ່ປີ 2015 ແລະ ສົ່ງເງິນສະຕິໃຫ້ຂັ້ນເທິງ 83 ລ້ານກ່ວາກີບ. ປະຈຸບັນ ມີສະມາຊິກກອງທຶນຊ່ວຍເຫຼືອເຊິ່ງກັນ ແລະ ກັນ 983 ສະຫາຍ, ມີຍອດປະກອບທຶນສູງສຸດ 25,6 ລ້ານກີບ/ຄົນ ມາຮອດເດືອນ 12/2019 ລວມ ຍອດເງິນກອງທຶນມີ 20,2 ຕື້ກີບ ແລະ ໄລຍະ 5 ປີຜ່ານມາ ໄດ້ປ່ອຍໃຫ້ສະມາຊິກກູ້ຢືມ 1.352 ລາຍ (ວົງເງິນທີ່ປ່ອຍກູ້ທັງໝົດ 74,61 ຕື້ກ່ວາກີບ) ໃນນີ້ປ່ອຍໃຫ້ສະມາຊິກກູ້ຢືມຮັກສາສຸຂະພາບ ແລະ ແກ້ໄຂວິກິດການເປັນຢູ່ຂອງສະມາຊິກ 325 ລາຍ ໂດຍລວມແລ້ວກອງທຶນດັ່ງກ່າວ ໄດ້ມີປະໂຫຍດຫຼາຍຕໍ່ສະມາຊິກກຳມະບານ.




ນອກຈາກການແຂ່ງຂັນປະຕິບັດໜ້າທີ່ວິຊາສະເພາະແລ້ວ, ບັນດາສະມາຊິກກຳມະບານ ກໍ່ເຂົ້າຮ່ວມຂະບວນການ ເພື່ອຂໍ່ານັບຮັບຕ້ອນວັນສຳຄັນຂອງຊາດ, ຂອງພັກ, ຂອງທະນາຄານ ແລະ ຂອງສາກົນ ເປັນຕົ້ນ ເຂົ້າຮ່ວມບໍລິຈາກເລືອດ 355 ເທື່ອຄົນ, ຍ່າງເພື່ອສຸຂະພາບ, ອອກແຮງງານລວມ, ແຂ່ງຂັນນັບເງິນດ້ວຍມື, ແຂ່ງຂັນກິລາ, ຂະບວນການປູກຕົ້ນໄມ້, ເຂົ້າຊົມຫໍພິພິທະພັນ; ສຳຄັນອີກ ກໍ່ແມ່ນການສະໜັບສະໜູນຊ່ວຍເຫຼືອບັນດາໂຮງຮຽນ ທີ່ຢູ່ເຂດຫ່າງໄກສອກຫຼີກ ເປັນເງິນຈຳນວນ 695 ລ້ານກີບ; ນອກນີ້, ຍັງປະຕິບັດນະໂຍບາຍ ແລະ ຢ້ຽມຢາມພະນັກງານກໍ່ຄືຄອບຄົວທີ່ເຈັບເປັນ, ເກີດລູກ ແລະ ເສຍຊີວິດ ແລະ ວຽກງານສຳຄັນຕ່າງໆອີກ ຢ່າງເປັນເຈົ້າການ.

ກອງປະຊຸມ ຍັງໄດ້ປະກອບຄຳຄິດຄຳເຫັນໃນຫຼາຍດ້ານໃສ່ຮ່າງບົດລາຍງານຜ່ານມາ ແລະ ຮ່າງແຜນການ 5 ປີໃນຕໍ່ໜ້າ ອັນໄດ້ເຮັດໃຫ້ 2 ບົດດັ່ງກ່າວມີຄວາມອຸດົມສົມບູນຍິ່ງຂຶ້ນ ແລະ ໃນເວລາຕໍ່ມາ ໄດ້ມີການປ່ອນບັດຄັດເລືອກເອົາຄະນະກຳມະບານຮາກຖານຊຸດໃໝ່ ດ້ວຍບັນຍາກາດສ້າງສັນ, ມີປະຊາທິປະໄຕ ຊຶ່ງກອງປະຊຸມຄັ້ງປະຖົມມະລຶກ ໄດ້ມີຄວາມເປັນເອກະພາບເລືອກເອົາຄະນະບໍລິຫານງານກຳມະບານຮາກຖານ ທຄຕລ ຄັ້ງທີ X ປະກອບດ້ວຍ 11 ສະຫາຍ ແລະ ໄດ້ເລືອກເອົາສະຫາຍ ວຽງສຸກ ຈຸນທະວົງ ເປັນປະ ທານ; ເລືອກເອົາ 2 ຮອງປະທານ ປະກອບດ້ວຍສະຫາຍ ບຸນຊອດ ຟອງສະນິດ ເປັນຜູ້ປະຈຳການ; ສະຫາຍ ກົງສັກ ສຸພອນສີ ເປັນປະທານກວດກາ; ສະນັ້ນ ເພື່ອໃຫ້ແຜນການດຳເນີນໃນຕໍ່ໜ້າຂອງກຳມະບານຮາກຖານຊຸດໃໝ່ ມີຜົນສຳເລັດດ້ວຍບາດກ້າວທີ່ໜັກແໜ້ນ ແລະ ປະກອບສ່ວນໃຫ້ ທຄຕລ ໄດ້ຮັບການປ່ຽນແປງໃໝ່ໃນຫຼາຍດ້ານ ທີ່ຕັ້ງໜ້າຕາມຈິດໃຈຊີ້ນຳຂອງຂັ້ນເທິງນັ້ນ; ສະຫາຍຄະນະບໍລິຫານງານສະຫະພັນສູນກາງກຳມະບານລາວ, ປະທານສະພັນກຳມະບານ ທຫລ ແລະ ສະຫາຍເລຂາຄະນະພັກຮາກຖານ ທຄຕລ ກໍ່ໄດ້ພົດປຽນກັນ ມີຄຳເຫັນ ແລະ ຊີ້ນຳຕໍ່ກອງປະຊຸມດັ່ງກ່າວ.

**# ຂ່າວ-ພາບ: ຮັດສະໝີ ດວງສັດຈະ**

## ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ